ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງຄໍາມ່ວນ

ເລກທີ...55.../ສພຂ.ຄມ

ຄໍາມ່ວນ, ວັນທີ...26.....ຕຸລາ...2023

# ມະຕິ

## ຮັບຮອງເອົາ ຂໍ້ຕົກລົງເຈົ້າແຂວງຄໍາມ່ວນ ວ່າດ້ວຍເຂດສະຫງວນທາງຫຼວງ

- ອີງຕາມ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 65/ສພຊ, ລົງວັນທີ 10 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກໍາ (ສະບັບປັບປຸງ) ສະບັບເລກທີ 6/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍເຂດສະຫງວນທາງຫຼວງ ສະບັບເລກທີ 185/ສພຊ, ລົງວັນທີ 20 ມິຖຸນາ 2022;
- ອີງຕາມ ໜັງສືສະເໜີຂອງອົງການປົກຄອງແຂວງຄໍາມ່ວນ ສະບັບເລກທີ 96/ຈຂ, ລົງວັນທີ 11 ສິງຫາ 2023.

ພາຍຫຼັງກອງປະຊຸມສະໄໝສາມັນເທື່ອທີ່ 5 ຂອງສະພາປະຊາຊົນແຂວງຄໍາມ່ວນ ຊຸດທີ II ໄດ້ຄົ້ນຄ້ວາພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂໍ້ຕົກລົງເຈົ້າແຂວງຄໍາມ່ວນ ວ່າດ້ວຍເຂດສະຫງວນທາງຫຼວງ ໃນວາລະ ກອງປະຊຸມ ຄັ້ງວັນທີ 25 ສິງຫາ 2023.

### ກອງປະຊຸມສະພາປະຊາຊົນແຂວງຄໍາມ່ວນ ຕົກລົງ:

ມາດຕາ 1 ຮັບຮອງເອົາ ຂໍ້ຕົກລົງເຈົ້າແຂວງຄໍາມ່ວນ ວ່າດ້ວຍວ່າດ້ວຍເຂດສະຫງວນທາງຫຼວງ;

ມາດຕາ 2 ມອບໃຫ້ເຈົ້າແຂວງຄໍາມ່ວນ ອອກຂໍ້ຕົກລົງ ແລະ ປະກາດໃຊ້ຢ່າງເປັນທາງການ;

ມາດຕາ 3 ມອບໃຫ້ຄະນະປະຈໍາສະພາປະຊາຊົນແຂວງຄໍາມ່ວນ, ຄະນະກໍາມະການທີ່ກ່ຽວຂ້ອງ, ສະມາຊິກສະພາ ປະຊາຊົນແຂວງຄໍາມ່ວນ, ອົງການກວດກາລັດແຂວງຄໍາມ່ວນ ເປັນຜູ້ຕິດຕາມກວດກາ ແລະ ຈັດຕັ້ງປະຕິບັດ ມະຕິສະບັບນີ້ຕາມ ພາລະບົດບາດ, ສິດ ແລະ ໜ້າທີ່ ຕາມກົດໝາຍຢ່າງເຂັ້ມງວດ;

ມາດຕາ 4 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ສະພາປະຊາຊົນແຂວງຄໍາມ່ວນ

ປະທານ

ບຸນມີ ພິມມະສອນ

❖ ບ່ອນສົ່ງ:

- ອົງການປົກຄອງແຂວງຄໍາມ່ວນ 01 ສະບັບ;
- ເກັບມ້ຽນ 01 ສະບັບ.

ສແກນດ້ວຍ CamScanner

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຄຳມ່ວນ

ເລກທີ: 683 /ຈຂ.
ຄຳມ່ວນ, ວັນທີ: 24 ພຶດສາ 2024

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງເຂດສະຫງວນທາງຫຼວງ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍທາງຫຼວງ ສະບັບປັບປຸງ ສະບັບເລກທີ 06/ສພຊ, ລົງວັນທີ 8 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍເຂດສະຫງວນທາງຫຼວງ ສະບັບເລກທີ 185/ລບ, ລົງວັນທີ 20 ມິຖຸນາ 2022;
- ອີງຕາມ ມະຕິຂອງສະພາປະຊາຊົນແຂວງຄຳມ່ວນ ຮັບຮອງເອົາຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງເຂດສະຫງວນທາງຫຼວງ ສະບັບເລກທີ 55/ສພຂ.ຄມ, ລົງວັນທີ 26 ຕຸລາ 2023.

## ເຈົ້າແຂວງ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ, ກວດກາເຂດສະຫງວນຂອງທາງຫຼວງ ເປັນຕົ້ນການວາງແຜນ, ສຳຫຼວດ, ອອກແບບ, ກໍ່ສ້າງ ແລະ ຂະຫຍາຍ ເພື່ອບໍ່ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີພຶດຕິກຳລ່ວງລະເມີດ, ຄອບຄອງ, ທຳລາຍໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ ຫຼື ດຳເນີນກິດຈະການກໍ່ສ້າງໃດໜຶ່ງໃນເຂດສະຫງວນຂອງທາງຫຼວງ ແນໃສ່ເຮັດໃຫ້ວຽກງານຄຸ້ມຄອງເຂດສະຫງວນມີປະສິດທິພາບ, ປະສິດທິຜົນ, ຄຸນນະພາບ, ໂປ່ງໃສ ແລະ ປົກປັກຮັກສາສິ່ງແວດລ້ອມ ພ້ອມທັງຮັບປະກັນໃຫ້ການຈະລາຈອນມີຄວາມສະດວກ, ວ່ອງໄວ, ປອດໄພ, ເປັນລະບຽບຮຽບຮ້ອຍ ແລະ ສວຍງາມ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງຄຳມ່ວນ.

**ມາດຕາ 2  ການຄຸ້ມຄອງເຂດສະຫງວນຂອງທາງຫຼວງ**

ການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ແມ່ນການຄຸ້ມຄອງຂອບເຂດພື້ນທີ່ຂອງທາງຫຼວງແຕ່ລະປະເພດ ຕາມທີ່ກົດໝາຍທາງຫຼວງໄດ້ກຳນົດໄວ້ ລວມທັງໂຄງປະກອບ, ສິ່ງປະກອບ, ສິ້ນສ່ວນຂອງຂົວ-ທໍ່ ແລະ ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ;

ເຂດສະຫງວນຂອງທາງຫຼວງ ແມ່ນພື້ນທີ່ທັງໝົດຂອງທາງຫຼວງ ຢູ່ໜ້າດິນ, ເທິງໜ້າດິນ, ໃຕ້ດິນ, ເໜືອນ້ຳໄຫຼ, ໃຕ້ນ້ຳໄຫຼ ທີ່ສະຫງວນໄວ້ເພື່ອປ້ອງກັນ, ພັດທະນາ ແລະ ຂະຫຍາຍທາງຫຼວງ;

ທີ່ດິນທາງຫຼວງ ແມ່ນຂອບເຂດພື້ນທີ່ທາງຫຼວງແຕ່ລະປະເພດ ທີ່ສະຫງວນໄວ້ເພື່ອກິດຈະການທາງຫຼວງ ລວມທັງແຫຼ່ງວັດສະດຸກໍ່ສ້າງເປັນຕົ້ນ ບໍ່ດິນ, ບໍ່ຫີນ;

ການຄຸ້ມຄອງທີ່ດິນທາງຫຼວງ ແມ່ນການສຳຫຼວດ ປັກຫຼັກໝາຍຂອບເຂດຂອງທາງຫຼວງ, ແຫຼ່ງວັດສະດຸກໍ່ສ້າງ ນຳສະເໜີຂະແໜງການທີ່ກ່ຽວຂ້ອງພິຈາລະນາ ເພື່ອຂຶ້ນບັນຊີ ແລະ ຈົດທະບຽນເປັນທີ່ດິນທາງຫຼວງ, ປົກປັກຮັກສາທີ່ດິນດັ່ງກ່າວໃຫ້ມີປະສິດທິພາບ, ຮັບປະກັນບໍ່ໃຫ້ມີການບຸກລຸກ ຫຼື ນຳໃຊ້ທີ່ດິນທາງຫຼວງ ໄປສູ່ເປົ້າໝາຍອື່ນ.

**ມາດຕາ 3  ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ທາງຫຼວງແຫ່ງຊາດ ແມ່ນ ທາງເຊື່ອມຈອດລະຫວ່າງນະຄອນຫຼວງ ໄປຫາ ເທດສະບານຂອງແຂວງ, ລະຫວ່າງແຂວງ ຫາ ແຂວງ, ທາງຍຸດທະສາດສາຍຫຼັກທີ່ຮັບໃຊ້ຜົນປະໂຫຍດລວມຂອງຊາດ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ຜົນປະໂຫຍດລະຫວ່າງຊາດ ທັງມີຄວາມສຳຄັນທາງດ້ານເສດຖະກິດ-ສັງຄົມ ແລະ ທາງເຊື່ອມຈອດກັບດ່ານສາກົນລະຫວ່າງປະເທດ.ທາງຫຼວງແຫ່ງຊາດ ອາດຖືກກຳນົດເປັນທາງອະນຸພາກພື້ນ ຫຼື ພາກພື້ນ;

2. ທາງຫຼວງແຂວງ ແມ່ນທາງເຊື່ອມຈອດຈາກເທດສະບານຂອງແຂວງ, ນະຄອນຫຼວງ ໄປຫາທາງຫຼວງແຫ່ງຊາດ, ຈາກເທດສະບານຂອງແຂວງ ໄປຫາ ເມືອງ, ເທດສະບານ, ນະຄອນ, ຈາກເມືອງ ໄປຫາ ເມືອງ ຂອງແຂວງທີ່ຕິດຈອດກັນ, ຈາກເທດສະບານຂອງແຂວງ ໄປຫາ ເຂດພັດທະນາເສດຖະກິດ-ສັງຄົມທີ່ສຳຄັນ ເປັນຕົ້ນ ທ່າເຮືອ, ແຫຼ່ງທ່ອງທ່ຽວ, ສະຖານທີ່ປະຫວັດສາດ ແລະ ເຂດປ້ອງກັນຊາດ, ປ້ອງກັນຄວາມສະຫງົບຂອງແຂວງ;

3. ທາງຫຼວງເມືອງ ແມ່ນ ທາງເຊື່ອມຈອດຈາກ ເມືອງ, ເທດສະບານ, ນະຄອນ ໄປຫາ ບ້ານ, ຈາກບ້ານ ໄປຫາ ບ້ານຂອງ ເມືອງ, ເທດສະບານ, ນະຄອນ ທີ່ຕິດຈອດກັນ, ຈາກເມືອງ, ເທດສະບານ, ນະຄອນ ໄປຫາ ເຂດພັດທະນາເສດຖະກິດ-ສັງຄົມທີ່ສຳຄັນ ເປັນຕົ້ນ ທ່າເຮືອ, ແຫຼ່ງທ່ອງທ່ຽວ, ສະຖານທີ່ປະຫວັດສາດ ແລະ ເຂດປ້ອງກັນຊາດ, ປ້ອງກັນຄວາມສະຫງົບຂອງເມືອງ, ເທດສະບານ;

4. ທາງຕົວເມືອງ ແມ່ນທາງຢູ່ໃນເທດສະບານຂອງ ແຂວງ, ເມືອງ, ເທດສະບານ ຕາມທີ່ກຳນົດໄວ້ໃນແຜນຜັງຕົວເມືອງ;

❖ ທາງຕົວເມືອງ ປະກອບດ້ວຍຖະໜົນ ຕົ້ນຕໍ ດັ່ງນີ້:

1). ຖະໜົນຫຼວງ;

2). ຖະໜົນໃຫຍ່;

3). ຖະໜົນກາງ;

4). ຖະໜົນນ້ອຍ;

5). ຮ່ອມ.

ຖະໜົນຫຼວງ ໝາຍເຖິງເສັ້ນທາງສາຍເອກທີ່ຮັບເອົາກະແສການຈະລາຈອນທັງໝົດຂອງຕົວເມືອງລວມທັງກະແສການຈະລາຈອນເຂົ້າ-ອອກຕົວເມືອງ ຊຶ່ງແຜນຜັງຕົວເມືອງໄດ້ກຳນົດເປັນຖະໜົນສາຍເອກ;

ຖະໜົນໃຫຍ່ ໝາຍເຖິງ ເສັ້ນທາງສາຍຫຼັກທີ່ຮັບເອົາກະແສການຈະລາຈອນ ຈາກເສັ້ນທາງສາຍເອກ ແລະ ເຂດຕ່າງໆຂອງຕົວເມືອງເຊັ່ນ ເຂດທີ່ຢູ່ອາໃສ, ເຂດການຄ້າໃຈກາງເມືອງ, ເຂດອຸດສາຫະກຳ ແລະ ເຊື່ອມຈອດກັບຖະໜົນ ຊຶ່ງແຜນຜັງຕົວເມືອງໄດ້ກຳນົດເປັນຖະໜົນສາຍຫຼັກ;

ຖະໜົນກາງ ໝາຍເຖິງສາຍແຈກທີ່ຮັບເອົາການກະຈາຍກະແສການຈະລາຈອນ ລະຫວ່າງທາງໃນຄຸ້ມຕ່າງໆຂອງຕົວເມືອງ ແລະ ທາງຢູ່ໃນເຂດ ຫຼື ສະຖານທີ່ຕ່າງໆຂອງຕົວເມືອງ, ເຊື່ອມຈອດກັບຖະໜົນໃຫຍ່ ແລະ ຖະໜົນນ້ອຍ ຊຶ່ງແຜນຜັງຕົວເມືອງໄດ້ກຳນົດເປັນຖະໜົນສາຍແຈກ;

ຖະໜົນນ້ອຍ ໝາຍເຖິງ ທາງໃນຄຸ້ມຕ່າງໆຂອງຕົວເມືອງທີ່ຮັບເອົາກະແສການຈະລາຈອນ ລະຫວ່າງ ຖະໜົນ ແລະ ຮ່ອມ ເຊິ່ງແຜນຜັງຕົວເມືອງໄດ້ກຳນົດເປັນຖະໜົນເຊື່ອມ;

ຮ່ອມ ໝາຍເຖິງ ທາງທີ່ຮັບເອົາກະແສການຈະລາຈອນເຂົ້າ-ອອກລະຫວ່າງຖະໜົນນ້ອຍ ແລະ ເຂດຊຸມຊົນ ຊຶ່ງແຜນຜັງຕົວເມືອງໄດ້ກຳນົດເປັນທາງຮ່ອມ.

5. ທາງຊົນນະບົດ ແມ່ນທາງຢູ່ເຂດນອກຕົວເມືອງ, ເທດສະບານ, ນະຄອນ ທີ່ມີປະລິມານການສັນຈອນຕ່ຳ ຊຶ່ງເປັນທາງເຊື່ອມຈອດລະຫວ່າງບ້ານ ຫາ ບ້ານ, ສະຖານທີ່ການຜະລິດ, ການບໍລິການ ແລະ ແຫຼ່ງຊັບພະຍາກອນທຳມະຊາດ;

6. ທາງສະເພາະ ແມ່ນທາງເຊື່ອມຈອດກັບເຂດສະເພາະ ເປັນຕົ້ນ ເຂດຜະລິດກະສິກຳ, ອຸດສາຫະກຳ, ປ່າສະຫງວນ, ທ່ອງທ່ຽວ, ເຂດຄົ້ນຄວ້າ ແລະ ບໍລິການຂອງຂະແໜງການ, ເຂດປ້ອງກັນຊາດ, ປ້ອງກັນຄວາມສະຫງົບ;

7. ທາງແຍກຕ່າງລະດັບ ໝາຍເຖິງ ຈຸດທີ່ມີທາງຕັດກັນ ຫຼື ຄົບກັນແຕ່ສອງເສັ້ນຂຶ້ນໄປ ທີ່ມີລະດັບໜ້າທາງແຕກຕ່າງກັນ;

8. ທາງວົງວຽນ ໝາຍເຖິງ ຈຸດທີ່ມີທາງຕັດກັນ ຫຼື ຄົບກັນ ແຕ່ສອງເສັ້ນຂຶ້ນໄປ ໂດຍມີການສັນຈອນອ້ອມວົງມົນໄປໃນທິດທາງດຽວກັນ;

9. ດ້ານເໜືອນ້ຳໄຫຼ ໝາຍເຖິງ ເບື້ອງຈາກຈຸດສັງເກດຂອງກິດຈະການທາງຫຼວງໄປຕາມທິດທາງທວນກະແສນ້ຳໄຫຼ;

10. ດ້ານໃຕ້ນ້ຳໄຫຼ ໝາຍເຖິງ ເບື້ອງຈາກຈຸດສັງເກດຂອງກິດຈະການທາງຫຼວງໄປຕາມທິດທາງນ້ຳໄຫຼ;

11. ຈຸດສັງເກດ ໝາຍເຖິງ ຈຸດຂອບນອກສຸດຂອງໂຄງສ້າງກິດຈະການທາງຫຼວງ ໂດຍຖືເອົາຈຸດໃຈ ກາງຂອງໂຄງສ້າງເປັນໂຕເລີ່ມຕົ້ນວັດແທກ.

**ມາດຕາ 4 ນະໂຍບາຍຂອງລັດ**

ລັດຄຸ້ມຄອງ, ຕິດຕາມ, ຊຸກຍູ້ ແລະ ສົ່ງເສີມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ, ປະກອບສ່ວນເຂົ້າໃນວຽກງານທີ່ກ່ຽວຂ້ອງກັບການຄຸ້ມຄອງເຂດສະຫງວນຂອງທາງຫຼວງໃນຂອບເຂດແຂວງຄຳມ່ວນ.

**ມາດຕາ 5 ຫຼັກການ ກ່ຽວກັບການຄຸ້ມຄອງເຂດສະຫງວນຂອງທາງຫຼວງ**

ການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດພັດທະນາທາງຫຼວງ, ແຜນຜັງຕົວເມືອງ ແລະ ແຜນຍຸດທະສາດພັດທະນາຂອງຂະແໜງການອື່ນໆ ທັງສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເປັນພາຄີ;
2. ຖືກຕ້ອງຕາມກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກຂອງໂຄງການກໍ່ສ້າງ ແລະ ສ້ອມແປງ;
3. ບໍ່ສົ່ງຜົນກະທົບທາງລົບ ຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ໂຄງລ່າງພື້ນຖານທາງດ້ານເຕັກນິກ, ບູຮານສະຖານ, ທິວທັດທຳມະຊາດ ແລະ ສິ່ງແວດລ້ອມ;
4. ມີຄວາມໂປ່ງໃສ, ຍືນຍົງ ແລະ ສາມາດກວດສອບໄດ້;
5. ຮັບປະກັນການມີສ່ວນຮ່ວມຂອງຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ, ຂັ້ນບ້ານ ແລະ ປະຊາຊົນ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບການຄຸ້ມຄອງເຂດສະຫງວນຂອງທາງຫຼວງໃນຂອບເຂດແຂວງຄຳມ່ວນ.

## ໝວດທີ 2
## ເຂດສະຫງວນຂອງທາງຫຼວງ

**ມາດຕາ 7 ປະເພດເຂດສະຫງວນຂອງທາງຫຼວງ**

ເຂດສະຫງວນຂອງທາງຫຼວງ ແຕ່ລະປະເພດ ປະກອບດ້ວຍ:

1. ຢູ່ໜ້າດິນ;
2. ຢູ່ເທິງໜ້າດິນ;
3. ຢູ່ໃຕ້ດິນ;
4. ຢູ່ເທິງໜ້ານ້ຳ.

**ມາດຕາ 8 ເຂດສະຫງວນຢູ່ໜ້າດິນຂອງທາງຫຼວງ**

ເຂດສະຫງວນຢູ່ໜ້າດິນຂອງທາງຫຼວງ ແຕ່ລະປະເພດ ມີລວງກວ້າງ ດັ່ງນີ້:

1. ເບື້ອງລະ ຊາວຫ້າ ແມັດ ນັບແຕ່ໃຈກາງທາງອອກໄປ ສຳລັບທາງຫຼວງແຫ່ງຊາດ ແລະ ເບື້ອງລະ ສີ່ສິບ ຫາ ຫົກສິບ ແມັດ ນັບແຕ່ໃຈກາງທາງອອກໄປ ສຳລັບທາງຫຼວງແຫ່ງຊາດທີ່ຈະກໍ່ສ້າງໃໝ່;
2. ເບື້ອງລະ ສິບຫ້າ ແມັດ ນັບແຕ່ໃຈກາງທາງອອກໄປ ສຳລັບທາງຫຼວງແຂວງ;
3. ເບື້ອງລະ ສິບ ແມັດ ນັບແຕ່ໃຈກາງທາງອອກໄປ ສຳລັບທາງຫຼວງເມືອງ;
4. ເບື້ອງລະ ຫ້າ ແມັດ ນັບແຕ່ໃຈກາງທາງອອກໄປ ສຳລັບທາງຊົນນະບົດ;
5. ເຂດສະຫງວນທາງຫຼວງໃນຕົວເມືອງ ໃຫ້ປະຕິບັດຕາມແຜນຜັງລວມຂອງຕົວເມືອງ.

ສຳລັບເຂດສະຫງວນຂອງທາງສະເພາະ ໃຫ້ປະຕິບັດຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ບົນພື້ນຖານຄວາມເປັນເອກະພາບກັບອົງການຄຸ້ມຄອງເຂດສະຫງວນຂອງທາງຫຼວງ.

**ມາດຕາ 9 ເຂດສະຫງວນຢູ່ເທິງໜ້າດິນຂອງທາງຫຼວງ**

ເຂດສະຫງວນຢູ່ເທິງໜ້າດິນຂອງທາງຫຼວງ ແຕ່ລະປະເພດ ມີລວງສູງບໍ່ໃຫ້ຕໍ່າກວ່າ ຫ້າ ແມັດ ນັບແຕ່ໜ້າທາງລົດແລ່ນ ແລະ ໜ້າຂົວ;

ໃນກໍລະນີສາຍໄຟຟ້າ, ສາຍໂທລະຄົມມະນາຄົມ ແລະ ສາຍສື່ສານຂ້າມຜ່ານຢູ່ເທິງເຂດສະຫງວນຂອງທາງຫຼວງ ໃຫ້ເພີ່ມໄລຍະຄວາມປອດໄພເຂົ້າຕື່ມ ຕາມມາດຕະຖານເຕັກນິກຂອງພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 10 ເຂດສະຫງວນຢູ່ໃຕ້ດິນຂອງທາງຫຼວງ**

ເຂດສະຫງວນຢູ່ໃຕ້ດິນຂອງທາງຫຼວງແຕ່ລະປະເພດ ກໍານົດຕາມກໍານົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກຂອງແຕ່ລະກິດຈະການກໍ່ສ້າງ ແລະ ສ້ອມແປງ ເຊັ່ນ: ອຸໂມງ, ທາງລອດໃຕ້ດິນ, ການວາງທໍ່ນໍ້າປະປາ, ທໍ່ສາຍໂທລະສັບ, ທໍ່ສາຍໄຟຟ້າ, ທໍ່ສົ່ງນໍ້າມັນ-ອາຍແກັສ ແລະ ອື່ນໆ.

**ມາດຕາ 11 ເຂດສະຫງວນຂອງຂົວຢູ່ເທິງໜ້ານໍ້າ**

ເຂດສະຫງວນຂອງຂົວຢູ່ເທິງໜ້ານໍ້າ ແມ່ນພື້ນທີ ທີ່ສະຫງວນໄວ້ ຈາກຂອບນອກສຸດຂອງໂຄງສ້າງຂົວ ເພື່ອປ້ອງກັນຄວາມປອດໄພ ບໍ່ໃຫ້ມີການກໍ່ສ້າງ ແລະ ຂຸດຄົ້ນແຮ່ທາດ ຫຼື ວັດສະດຸກໍ່ສ້າງຕ່າງໆ.ເຂດສະຫງວນຂອງຂົວຢູ່ເທິງໜ້ານໍ້າ ມີລວງກວ້າງທັງສອງເບື້ອງ ດັ່ງນີ້:

1. ສໍາລັບຂົວທີ່ມີລວງຍາວ ແຕ່ໜຶ່ງຮ້ອຍແມັດລົງມາ ຢູ່ດ້ານເໜືອນໍ້າໄຫຼ ແມ່ນ ສອງຮ້ອຍຫ້າສິບແມັດ ແລະ ຢູ່ດ້ານໃຕ້ນໍ້າໄຫຼ ແມ່ນ ຫ້າຮ້ອຍແມັດ;
2. ສໍາລັບຂົວທີ່ມີລວງຍາວ ຫຼາຍກວ່າໜຶ່ງຮ້ອຍແມັດ ຢູ່ດ້ານເໜືອນໍ້າໄຫຼ ແມ່ນ ສອງຮ້ອຍຫ້າສິບແມັດ ແລະ ຢູ່ດ້ານໃຕ້ນໍ້າໄຫຼ ແມ່ນ ໜຶ່ງພັນແມັດ;
3. ສໍາລັບຂົວທີ່ມີລວງຍາວ ຫຼາຍກວ່າຫ້າຮ້ອຍແມັດ ຢູ່ດ້ານເໜືອນໍ້າໄຫຼ ແມ່ນ ສາມຮ້ອຍແມັດ ແລະ ຢູ່ດ້ານໃຕ້ນໍ້າໄຫຼ ແມ່ນ ໜຶ່ງພັນຫ້າຮ້ອຍແມັດ.

## ໝວດທີ 3
## ເຂດສະຫງວນຂອງທາງຫຼວງຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນ

**ມາດຕາ 12 ເຂດທາງຫຼວງຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນ**

ເຂດສະຫງວນຢູ່ໜ້າດິນຂອງທາງຫຼວງຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນ ແມ່ນໃຫ້ກໍານົດຕາມເງື່ອນໄຂຕົວຈິງຂອງລັກສະນະພູມີປະເທດ ແລະ ພູມສັນຖານຂອງແຕ່ລະເຂດ ດັ່ງນີ້:

1. ຄວາມເນີນຂອງໜ້າດິນທໍາມະຊາດ;
2. ຄວາມສູງຂອງພູຈາກໜ້າທາງ;
3. ຄວາມກວ້າງຂອງໜ້າທາງທີ່ຈະຂະຫຍາຍໃນອະນາຄົດ;
4. ຄວາມສະຖຽນລະພາບຂອງໂຄງສ້າງດິນ, ຫີນ ຢູ່ເບື້ອງເນີນພູ ແລະ ເບື້ອງຕະລິ່ງ.

ສໍາລັບເຂດສະຫງວນຢູ່ເທິງໜ້າດິນ ແລະ ຢູ່ໃຕ້ດິນ ຂອງທາງຫຼວງຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນແຕ່ລະປະເພດ ແມ່ນໃຫ້ປະຕິບັດຕາມ ມາດຕາ 9 ແລະ 10 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 13 ເຂດສະຫງວນຂອງທາງຕົວເມືອງຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນ**

ເຂດສະຫງວນຂອງທາງຕົວເມືອງຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນ ໃຫ້ປະຕິບັດຕາມແຜນຜັງລວມຂອງຕົວເມືອງ.

## ໝວດທີ 4
## ເຂດສະຫງວນຂອງວົງວຽນ

### ມາດຕາ 14 ການກຳນົດເຂດສະຫງວນຂອງວົງວຽນ

ການກຳນົດເຂດສະຫງວນຂອງວົງວຽນ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:

1. ພື້ນທີ່, ລັກສະນະພູມີປະເທດ ແລະ ພູມສັນຖານ;
2. ຄວາມໜາແໜ້ນຂອງປະຊາກອນອ້ອມຂ້າງ;
3. ປະລິມານການສັນຈອນ;
4. ການເຊື່ອມຈອດຂອງລະບົບທາງຫຼວງ, ຖະໜົນ;
5. ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກຂອງວົງວຽນ.

### ມາດຕາ 15 ໂຄງປະກອບຂອງວົງວຽນ

ວົງວຽນ ມີໂຄງປະກອບຕົ້ນຕໍ ດັ່ງນີ້:

1. ດອນກາງ;
2. ດອນແບ່ງທິດທາງຈະລາຈອນວົງວຽນ;
3. ຂອບກັນລໍ້;
4. ຊ່ອງຈະລາຈອນໃນວົງວຽນ;
5. ຊ່ອງຈະລາຈອນເຂົ້າວົງວຽນ;
6. ຊ່ອງຈະລາຈອນອອກຈາກວົງວຽນ;
7. ທາງຄົນຍ່າງ;
8. ທາງມ້າລາຍ (ສຳລັບຄົນຍ່າງຂ້າມທາງ).

### ມາດຕາ 16 ສິ່ງປະກອບຂອງວົງວຽນ

ວົງວຽນ ມີສິ່ງປະກອບຕົ້ນຕໍ ດັ່ງນີ້:

1. ປ້າຍຈະລາຈອນ;
2. ເຄື່ອງໝາຍຈະລາຈອນ;
3. ໄຟເບື້ອງທາງ;
4. ສັນຍາລັກ ແລະ ສິ່ງປະດັບ.

ການກຳນົດຮູບແບບ, ຂະໜາດ, ໂຄງປະກອບ ແລະ ສິ່ງປະກອບຂອງວົງວຽນ ຕ້ອງປະຕິບັດຕາມຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍການຮັບຮອງເອົາ ປຶ້ມຄູ່ມືອອກແບບຂົວທາງ ແລະ ປຶ້ມກຳນົດໝາຍເຕັກນິກ (ສະບັບປັບປຸງ 2018) ສະບັບເລກທີ 18723/ຍທຂ, ລົງວັນທີ 20 ສິງຫາ 2018.

## ໝວດທີ 5
## ການຄຸ້ມຄອງເຂດສະຫງວນຂອງທາງຫຼວງ

### ມາດຕາ 17 ການຂຶ້ນບັນຊີກິດຈະການຕ່າງໆ ທີ່ຢູ່ໃນເຂດສະຫງວນຂອງທາງຫຼວງ

ອົງການຄຸ້ມຄອງວຽກງານທາງຫຼວງ ແຕ່ລະຂັ້ນຕ້ອງຂຶ້ນບັນຊີກິດຈະການຕ່າງໆ ທີ່ຢູ່ໃນເຂດສະຫງວນ ດັ່ງກ່າວ ໂດຍປະສານສົມທົບກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າຂອງກິດຈະການນັ້ນ ເພື່ອສ້າງຖານຂໍ້ມູນສໍາລັບການນໍາໃຊ້ເຂົ້າໃນການຄຸ້ມຄອງ ແລະ ພັດທະນາພື້ນທີ່ດັ່ງກ່າວ.

### ມາດຕາ 18 ການຂໍອະນຸຍາດນໍາໃຊ້ເຂດສະຫງວນຂອງທາງຫຼວງ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຄວາມຈໍາເປັນໃນການນໍາໃຊ້ພື້ນທີ່ຢູ່ໃນເຂດສະຫງວນ ຂອງທາງຫຼວງ ຕ້ອງຂໍອະນຸຍາດຈາກອົງການຄຸ້ມຄອງວຽກງານທາງຫຼວງແຕ່ລະຂັ້ນ ເປັນຕົ້ນການຕິດຕັ້ງ ລະບົບໄຟຟ້າ, ທໍ່ນໍ້າປະປາ, ໂທລະຄົມມະນາຄົມ ແລະ ການສື່ສານ, ປ້າຍໂຄສະນາ, ປ້ອມຍາມ, ສິ່ງປຸກສ້າງ, ການຜະລິດກະສິກໍາ ແລະ ອື່ນໆ ເພື່ອສ້າງເປັນຖານຂໍ້ມູນນໍາໃຊ້ເຂົ້າໃນການຄຸ້ມຄອງປົກປັກຮັກສາ ແລະ ພັດທະນາເຂດສະຫງວນຂອງທາງຫຼວງ;

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກໍານົດ ອັດຕາຄ່າບໍລິການໃນການນໍາໃຊ້ພື້ນທີ່ຢູ່ໃນເຂດ ສະຫງວນຂອງທາງຫຼວງ;

ສ່ວນຂັ້ນຕອນ ແລະ ເງື່ອນໄຂໃນການຂໍອະນຸຍາດນໍາໃຊ້ເຂດສະຫງວນຂອງທາງຫຼວງ, ຂັ້ນຕອນໃນ ການຂໍອະນຸຍາດກໍ່ສ້າງ ຫຼື ປຸກສ້າງກິດຈະການຢູ່ເຂດສະຫງວນຂອງທາງຫຼວງ ແລະ ຫຼັກການ, ມາດຕະຖານ ໃນການກໍ່ສ້າງ ຫຼື ປຸກສ້າງແມ່ນພາຍຫຼັງທີ່ ກະຊວງໂຍທາທິການ ແລະ ຂົນສົ່ງ ອອກໜັງສືແນະນໍາຢ່າງເປັນ ທາງການໃນການຈັດຕັ້ງປະຕິບັດ;

ການຂໍອະນຸຍາດດໍາເນີນກິດຈະການຊົ່ວຄາວໃດໜຶ່ງ ຢູ່ເຂດສະຫງວນຂອງທາງຫຼວງ ເປັນຕົ້ນ ງານ ປະເພນີ, ງານຕະຫຼາດນັດ ແລະ ອື່ນໆ ຕ້ອງໄດ້ປະສານສົມທົບກັບຂະແໜງໂຍທາທິການ ແລະ ຂົນສົ່ງແຂວງ, ເມືອງ, ເທດສະບານ ຕາມການແບ່ງຂັ້ນຄຸ້ມຄອງ.

### ມາດຕາ 19 ສິດ ແລະ ພັນທະຂອງຜູ້ທີ່ໄດ້ຮັບອະນຸຍາດນໍາໃຊ້ເຂດສະຫງວນຂອງທາງຫຼວງ

ຜູ້ທີ່ໄດ້ຮັບອະນຸຍາດນໍາໃຊ້ເຂດສະຫງວນຂອງທາງຫຼວງ ມີສິດ ແລະ ພັນທະ ດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ມີພື້ນທີ່ຕິດແປະກັບເຂດສະຫງວນ ຂອງທາງຫຼວງ ທີ່ໄດ້ຮັບອະນຸຍາດນໍາໃຊ້ ຕ້ອງປົກປັກຮັກສາພື້ນທີ່ເຂດສະຫງວນຂອງທາງຫຼວງ ຕາມເນື້ອທີ່ ແລະ ເປົ້າໝາຍທີ່ໄດ້ຮັບອະນຸຍາດໃຫ້ຢູ່ໃນສະພາບດີ;
2. ອໍານວຍຄວາມສະດວກ, ໃຫ້ການຮ່ວມມື, ສະໜອງຂໍ້ມູນຂ່າວສານທາງດ້ານເຕັກນິກ ແລະ ນິຕິ ກໍາທີ່ກ່ຽວຂ້ອງ ໃຫ້ອົງການຄຸ້ມຄອງວຽກງານທາງຫຼວງ;
3. ໃນກໍລະນີທີ່ພົບເຫັນ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ມີພຶດຕິ ກໍາຕໍ່ການມ້າງເພທໍາລາຍ, ສ້າງຄວາມເສຍຫາຍຕໍ່ໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງຫຼວງ ຕ້ອງລາຍງານຕໍ່ອົງການຄຸ້ມຄອງວຽກງານທາງຫຼວງ;
4. ຊໍາລະຄ່າບໍລິການໃນການນໍາໃຊ້ພື້ນທີ່ເຂດສະຫງວນຂອງທາງຫຼວງ ຕາມທີ່ໄດ້ກໍານົດໄວ້ ໃນ ກົດໝາຍ ຫຼື ສັນຍາ;
5. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 6
## ຂໍ້ຫ້າມ

### ມາດຕາ 20 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການປຸກສ້າງ ແລະ ກໍ່ສ້າງສິ່ງຕ່າງໆ ໃນເຂດສະຫງວນຂອງທາງຫຼວງ ໂດຍບໍ່ໄດ້ຮັບອະນຸ ຍາດຈາກອົງການຄຸ້ມຄອງວຽກງານທາງຫຼວງ;

2. ຕິດຕັ້ງ, ແຂວນ, ວາງ, ຖິ້ມ, ກອງວັດສະດຸ ແລະ ວັດຖຸອັນຕະລາຍໃດໜຶ່ງ ທີ່ເປັນການກີດຂວາງ ການຈະລາຈອນ, ລະບົບລະບາຍນ້ຳແຄມທາງ ແລະ ທາງໄຫຼຂອງນ້ຳໃນເຂດສະຫງວນຂອງທາງຫຼວງ;

3. ຖົມດິນສູງກວ່າ ໜ້າທາງ, ຖົມຮ່ອງລະບາຍນ້ຳແຄມທາງ, ຂຸດເຈາະ, ກົ່ນ, ຊຶ່ງເປັນຜົນກະທົບທີ່ເຮັດໃຫ້ບ່າທາງ, ໜ້າທາງຫຼວງ ເປ່ເພເສຍຫາຍ;

4. ຖິ້ມ ຂີ້ເຫຍື້ອ, ສິ່ງເສດເຫຼືອ, ນ້ຳເປື້ອນ, ຫີນ, ດິນ, ຊາຍ, ເສດວັດສະດຸກໍ່ສ້າງອື່ນໆ ໃນເຂດສະຫງວນຂອງທາງຫຼວງ;

5. ຂັດຂວາງ, ບໍ່ອຳນວຍຄວາມສະດວກ ຫຼື ບໍ່ໃຫ້ການຮ່ວມມືແກ່ການຂະຫຍາຍທາງຫຼວງໃນເຂດສະຫງວນຂອງທາງຫຼວງ;

6. ມ້າງເພ, ທຳລາຍ ໂຄງປະກອບ, ສິ່ງປະກອບ, ສິ້ນສ່ວນຂອງຂົວ-ທໍ່ ແລະ ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ;

7. ປູກ, ຕັດ ຕົ້ນໄມ້ໃນເຂດສະຫງວນຂອງທາງຫຼວງ ກ່ອນໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 21 ຂໍ້ຫ້າມສຳລັບຜູ້ດຳເນີນກິດຈະການ

ຫ້າມຜູ້ດຳເນີນກິດຈະການ ມີພຶດຕິກຳ ດັ່ງນີ້:

1. ດຳເນີນການປຸກສ້າງ, ກໍ່ສ້າງ ທີ່ບໍ່ຖືກຕ້ອງຕາມແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ທີ່ໄດ້ຮັບອະນຸຍາດ;

2. ໃຫ້ສິນບົນ, ສົມຮູ້ຮ່ວມຄິດກັບພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຫຼື ຜູ້ປະກອບການອື່ນໆ ປອມແປງເອກະສານ, ໃນການດຳເນີນກິດຈະການຢູ່ເຂດສະຫງວນຂອງທາງຫຼວງ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ;

3. ດຳເນີນການປຸກສ້າງ ແລະ ກໍ່ສ້າງ ທີ່ບໍ່ມີລະບົບປ້ອງກັນຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ;

4. ມອບ, ຂາຍ ຫຼື ໂອນ ກິດຈະການຢູ່ໃນເຂດສະຫງວນຂອງທາງຫຼວງ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານທາງຫຼວງ;

5. ບໍ່ດຳເນີນການ ປຸກສ້າງ, ກໍ່ສ້າງ ແລະ ກິດຈະການອື່ນ ທີ່ຕົນໄດ້ເຊັນສັນຍາກັບອົງການຄຸ້ມຄອງວຽກງານທາງຫຼວງ.

**ມາດຕາ 22 ຂໍ້ຫ້າມສໍາລັບ ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ສົມຮູ້ຮ່ວມຄິດກັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ໃນການອອກໃບຢັ້ງຢືນໃຫ້ນໍາໃຊ້ເຂດສະຫງວນທາງຫຼວງ;

2. ອະນຸຍາດໃຫ້ນໍາໃຊ້ພື້ນທີ່ໃນເຂດສະຫງວນຂອງທາງຫຼວງທີ່ບໍ່ຖືກຕ້ອງຕາມຂໍ້ກົດໝາຍສະບັບນີ້;

3. ຮັບສິນບົນ, ກົດໜ່ວງຖ່ວງດຶງ, ປອມແປງເອກະສານ ກ່ຽວກັບການນໍາໃຊ້ເຂດສະຫງວນທາງຫຼວງ;

4. ສວຍໃຊ້ໜ້າທີ່ຕໍາແໜ່ງເພື່ອຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ;

5. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ໃນການຕິດຕາມກວດກາ ການດໍາເນີນກິດຈະການທີ່ບໍ່ ຖືກຕ້ອງໃນເຂດສະຫງວນຂອງທາງຫຼວງ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ອົງການຄຸ້ມຄອງ, ເຈົ້າໜ້າທີ່ ແລະ ອົງການກວດກາ ວຽກງານ ກ່ຽວກັບເຂດສະຫງວນຂອງທາງຫຼວງ

**ມາດຕາ 23 ອົງການຄຸ້ມຄອງເຂດສະຫງວນຂອງທາງຫຼວງ**

ອົງການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ປະກອບມີ ດັ່ງນີ້:

1. ພະແນກໂຍທາທິການ ແລະ ຂົນສົ່ງແຂວງ;
2. ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ;
3. ອົງການປົກຄອງບ້ານ.

**ມາດຕາ 24 ສິດ ແລະ ໜ້າທີ່ຂອງພະແນກໂຍທາທິການ ແລະ ຂົນສົ່ງແຂວງ**

ໃນການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ຍຸດທະສາດ ແລະ ແຜນແມ່ບົດ ການພັດທະນາເຂດສະຫງວນຂອງທາງຫຼວງ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດ;

2. ໂຄສະນາ ແລະ ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ແຜນແມ່ບົດ ແລະ ລະບຽບການ ກ່ຽວກັບການພັດທະນາ ແລະ ປົກປັກຮັກສາເຂດສະຫງວນຂອງທາງຫຼວງ;

3. ປຸກຈິດສໍານຶກໃຫ້ປະຊາຊົນທີ່ຢູ່ບໍລິເວນລຽບຕາມແຄມທາງຫຼວງ, ເພື່ອປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນຂອງທາງຫຼວງ;

4. ຂຶ້ນແຜນ ແລະ ນໍາໃຊ້ງົບປະມານ ເພື່ອນໍາໃຊ້ເຂົ້າໃນການຄຸ້ມຄອງ, ພັດທະນາ ແລະ ປົກປັກຮັກ ສາເຂດສະຫງວນຂອງທາງຫຼວງ;

5. ອະນຸຍາດໃນການປຸກສ້າງ, ກໍ່ສ້າງ ຫຼື ກິດຈະການໃດໜຶ່ງ ຢູ່ໃນເຂດສະຫງວນຂອງທາງຫຼວງ;

6. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ເພື່ອແກ້ໄຂບັນຫາທີ່ເກີດຂຶ້ນກ່ຽວກັບເຂດສະຫງວນຂອງທາງຫຼວງ;

7. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຂຶ້ນບັນຊີເຂດສະຫງວນຂອງທາງຫຼວງ;

8. ສຳຫຼວດ, ເກັບກຳຂໍ້ມູນ ແລະ ສະຖິຕິ, ສິ່ງປຸກສ້າງ, ກໍ່ສ້າງ ແລະ ກິດຈະການອື່ນ ໃນເຂດສະຫງວນຂອງທາງຫຼວງ;

9. ສະເໜີ ກົມຂົວທາງ ເພື່ອຄົ້ນຄວ້າ ແລະ ນຳສະເໜີ ກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາຮັບຮອງເອົາການຍົກລະດັບເຂດສະຫງວນຂອງທາງຫຼວງແຫ່ງຊາດ;

10. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ເພື່ອພິຈາລະນາແກ້ໄຂບັນຫາຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເຂົ້ານຳໃຊ້ເຂດສະຫງວນຂອງທາງຫຼວງໂດຍບໍ່ໄດ້ຮັບອະນຸຍາດ;

11. ຮັບຮອງເອົາແບບແຜນຜັງໂຄງລ່າງພື້ນຖານທາງດ້ານເຕັກນິກ ທີ່ສະເໜີນຳໃຊ້ພື້ນທີ່ ໃນເຂດສະ ຫງວນທາງຫຼວງ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ**

ໃນການຄຸ້ມຄອງເຂດສະຫງວນທາງຫຼວງ ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ, ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ໂຄສະນາ ແລະ ເຜີຍແຜ່ນະໂຍບາຍ, ຍຸດທະສາດ, ແຜນແມ່ບົດ ແລະ ລະບຽບການ ກ່ຽວກັບການພັດທະນາ ແລະ ປົກປັກຮັກສາເຂດສະຫງວນຂອງທາງຫຼວງ;

2. ປຸກຈິດສຳນຶກໃຫ້ປະຊາຊົນທີ່ຢູ່ບໍລິເວນລຽບຕາມແຄມທາງຫຼວງ, ປະກອບສ່ວນເຂົ້າໃນວຽກງານຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນຂອງທາງຫຼວງ;

3. ຂຶ້ນແຜນ ແລະ ນຳໃຊ້ງົບປະມານ ເພື່ອນຳໃຊ້ເຂົ້າໃນການຄຸ້ມຄອງ, ພັດທະນາ ແລະ ປົກປັກຮັກສາເຂດສະຫງວນຂອງທາງຫຼວງ;

4. ປະສານສົມທົບ ກັບ ຫ້ອງການທີ່ກ່ຽວຂ້ອງຂອງເມືອງ, ເທດສະບານ ແລະ ອົງການປົກຄອງບ້ານ ເພື່ອພິຈາລະນາແກ້ໄຂ ບັນຫາທີ່ເກີດຂຶ້ນໃນເຂດສະຫງວນຂອງທາງຫຼວງ;

5. ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ຂຶ້ນບັນຊີເຂດສະຫງວນຂອງທາງຫຼວງ;

6. ສຳຫຼວດ, ເກັບກຳ ຂໍ້ມູນ ແລະ ສະຖິຕິ, ສິ່ງປຸກສ້າງ, ກໍ່ສ້າງ ແລະ ກິດຈະການອື່ນໆ ໃນເຂດສະຫງວນຂອງທາງຫຼວງ;

7. ສະເໜີ ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ເພື່ອຄົ້ນຄວ້າ ແລະ ນຳສະເໜີ ກະຊວງໂຍທາທິການ ແລະ ຂົນສົ່ງ ພິຈາລະນາຮັບຮອງເອົາການຍົກລະດັບເຂດສະຫງວນຂອງທາງຫຼວງແຫ່ງຊາດ;

8. ປະສານສົມທົບກັບຫ້ອງການອື່ນໆ ແລະ ອົງການປົກຄອງບ້ານ ເພື່ອພິຈາລະນາແກ້ໄຂບັນຫາຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ເຂົ້ານຳໃຊ້ເຂດສະຫງວນຂອງທາງຫຼວງ;

9. ຈັດຕັ້ງປະຕິບັດຕາມແຜນຜັງ ລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກ ທີ່ໄດ້ຖືກຮັບຮອງໃຫ້ຕິດຕັ້ງຢູ່ໃນເຂດສະຫງວນທາງຫຼວງ;

10. ຮັບຮອງເອົາແບບແຜນຜັງໂຄງລ່າງພື້ນຖານທາງດ້ານເຕັກນິກ ທີ່ສະເໜີນຳໃຊ້ພື້ນທີ່ໃນເຂດສະຫງວນຂອງທາງຫຼວງ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 26 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ໃນການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ອົງການປົກຄອງບ້ານ ມີສິດ ແລະ ໜ້າທີ່ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຊ່ວຍປົກປັກຮັກສາໂຄງປະກອບ, ສິ່ງປະກອບ, ສິ້ນສ່ວນຂອງຂົວ-ທໍ່ ແລະ ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ;

2. ລາຍງານ ການລະເມີດເຂດສະຫງວນຂອງທາງຫຼວງ ໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເຈົ້າໜ້າທີ່ທາງຫຼວງ;

3. ຊ່ວຍໂຄສະນາ ແລະ ເຜີຍແຜ່ລະບຽບການໃຫ້ປະຊາຊົນຮັບຮູ້, ປຸກລະດົມປະຊາຊົນໃຫ້ການຮ່ວມມື ແລະ ປະກອບສ່ວນເຂົ້າໃນການຄຸ້ມຄອງ ແລະ ປົກປັກຮັກສາເຂດສະຫງວນຂອງທາງຫຼວງ;

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 27 ເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ**

ເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ ແມ່ນພະນັກງານສັງກັດຢູ່ອົງການກວດກາພາຍໃນຂອງອົງການກວດກາເຂດສະຫງວນຂອງທາງຫຼວງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍ ເຈົ້າແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ ຕາມການແບ່ງຂັ້ນຄຸ້ມຄອງວຽກງານທາງຫຼວງ;

ເຈົ້າຫນ້າທີ່ໂຍທາທິການ ແລະ ຂົນສົ່ງ ມີເຄື່ອງແບບ ແລະ ເຄື່ອງໝາຍສະເພາະ ໃນເວລາປະຕິບັດຫນ້າທີ່ຄຸ້ມຄອງເຂດສະຫງວນຂອງທາງຫຼວງ.

**ມາດຕາ 28 ສິດ ແລະ ຫນ້າທີ່ ຂອງເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ**

1. ຕິດຕາມ, ກວດກາ ການນຳໃຊ້ເຂດສະຫງວນຂອງທາງຫຼວງ ຢ່າງເປັນປົກກະຕິ ແລະ ແກ້ໄຂຢ່າງທັນການ ກໍລະນີມີການລະເມີດ ຂໍ້ຕົກລົງສະບັບນີ້ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ເປັນຕົ້ນ ການບຸກລຸກເຂດສະຫງວນຂອງທາງຫຼວງ, ການທຳລາຍໂຄງປະກອບ, ສິ່ງປະກອບ, ສິ້ນສ່ວນຂອງຂົວ-ທໍ່, ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ ແລະ ການສ້າງຄວາມເປິະເປື້ອນໃສ່ທາງຫຼວງ;

2. ເກັບກຳ, ສະໜອງຂໍ້ມູນຫຼັກຖານແລ້ວສະເໜີຂະແໜງການທີ່ກ່ຽວຂ້ອງພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການກ່ຽວກັບວຽກງານທາງຫຼວງ ເປັນຕົ້ນ ສິ່ງປຸກສ້າງຕ່າງໆ;

3. ຮັບ ແລະ ບັນທຶກການແຈ້ງຄວາມ, ທວງເອົາ ແລະ ກວດກາເອກະສານທີ່ເຫັນວ່າມີການລະເມີດ ຂໍ້ຕົກລົງສະບັບນີ້ ແລະ ລະບຽບການກ່ຽວກັບທາງຫຼວງ;

4. ເກັບກຳຂໍ້ມູນລາຍລະອຽດ ເພື່ອນຳສົ່ງໃຫ້ເຈົ້າໜ້າທີ່ ທີ່ກ່ຽວຂ້ອງດຳເນີນການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ;

5. ພົວພັນ ແລະ ປະສານສົມທົບກັບອົງການຈັດຕັ້ງອື່ນໆທີ່ກ່ຽວຂ້ອງຂອງແຂວງ, ເມືອງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ;

6. ນຳໃຊ້ສິດ ແລະ ປະຕິບັດຫນ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 29 ອົງການກວດກາ**

ອົງການກວດກາ, ຄຸ້ມຄອງເຂດສະຫງວນທາງຫຼວງ ປະກອບມີ ດັ່ງນີ້:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັບອົງການຄຸ້ມຄອງ;
2. ອົງການກວດກາພາຍນອກ ປະກອບມີ:
   - ສະພາປະຊາຊົນຂັ້ນແຂວງ;
   - ອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງແຂວງ, ອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງເມືອງ.

**ມາດຕາ 30 ເນື້ອໃນການກວດກາ**

ການກວດວຽກງານຄຸ້ມຄອງເຂດສະຫງວນຂອງທາງຫຼວງ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນແມ່ບົດ, ແຜນພັດທະນາການຄຸ້ມຄອງເຂດສະຫງວນຂອງທາງຫຼວງ, ກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງເຂດສະຫງວນຂອງທາງຫຼວງ;
2. ການຈັດຕັ້ງປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ທາງຫຼວງ ແລະ ພະນັກງານຮັບຜິດຊອບວຽກງານຄຸ້ມຄອງເຂດສະຫງວນຂອງທາງຫຼວງ;
3. ການນໍາໃຊ້ເຂດສະຫງວນຂອງທາງຫຼວງຂອງຜູ້ດໍາເນີນກິດຈະການ ແລະ ທຸລະກິດ.

**ມາດຕາ 31 ຮູບການກວດກາເຂດສະຫງວນຂອງທາງຫຼວງ**

ການກວດກາເຂດສະຫງວນຂອງທາງຫຼວງ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ແມ່ນການກວດກາຕາມແຜນການ ທີ່ມີລັກສະນະກວດກາເປັນປະຈໍາ ແລະ ມີກໍານົດເວລາທີ່ແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈໍາເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນ;
3. ການກວດກາແບບກະທັນຫັນ ແມ່ນການກວດກາເມື່ອເຫັນວ່າ ຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດໍາເນີນການກວດກາ ອົງການກວດກາເຂດສະຫງວນຂອງທາງຫຼວງ ຕ້ອງປະຕິບັດຕາມກົດຫມາຍ ແລະ ລະບຽບການຢ່າງເຂັ້ມງວດ.

## ໝວດທີ 8
## ງົບປະມານ, ເຄື່ອງແບບ, ເຄື່ອງໝາຍ ແລະ ກາໝາຍ

**ມາດຕາ 32 ງົບປະມານ**

ເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ທີ່ເຄື່ອນໄຫວເຮັດໜ້າທີ່ຕາມຂໍ້ຕົກລົງສະບັບນີ້, ນໍາໃຊ້ງົບປະມານຂອງແຂວງ ໂດຍສອດຄ່ອງກັບງົບປະມານແຫ່ງລັດ, ຕ້ອງໄດ້ສ້າງແຜນການເຄື່ອນໄຫວວຽກງານ ນໍາສະເໜີແຂວງພິຈາລະນາອະນຸມັດ ເພື່ອໃຊ້ຈ່າຍເຂົ້າໃນການຄຸ້ມຄອງເຂດສະຫງວນຂອງທາງຫຼວງ.

**ມາດຕາ 33 ເຄື່ອງແບບ, ເຄື່ອງໝາຍ ແລະ ກາໝາຍ**

ເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງຂັ້ນແຂວງ, ຂັ້ນເມືອງ ມີເຄື່ອງແບບ, ເຄື່ອງໝາຍ ແລະ ກາໝາຍສະເພາະ ເພື່ອນຳໃຊ້ເຂົ້າໃນເວລາປະຕິບັດໜ້າທີ່ວຽກງານ, ຊຶ່ງໄດ້ຮັບການຮັບຮອງຈາກລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ;

ການຕັດເຄື່ອງແບບ, ເຄື່ອງໝາຍ ແລະ ກາໝາຍຂອງເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງຂັ້ນແຂວງ, ຂັ້ນເມືອງ ຊຸດນ້ອຍປີລະ ສອງຊຸດ ແລະ ຊຸດໃຫຍ່ ສາມ ປີໃດໜຶ່ງຊຸດ.

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 34 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ທີ່ເປັນການປະກອບສ່ວນເຂົ້າໃນການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນໆ ຕາມລະບຽບການ.

**ມາດຕາ 35 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນກ່ຽວກັບການຄຸ້ມຄອງເຂດສະຫງວນຂອງທາງຫຼວງ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກດຳເນີນຄະດີ ຕາມກົລະນີເບົາ ຫຼື ໜັກ.

**ມາດຕາ 36 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ນອກຈາກຈະຖືກປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນ ດຳລັດ ວ່າດ້ວຍເຂດສະຫງວນທາງຫຼວງ ຕາມກໍລະນີ ດັ່ງນີ້:

1. ການປຸກສ້າງ, ກໍ່ສ້າງ ຫຼື ດຳເນີນກິດຈະການຊົ່ວຄາວ ຫຼື ຖາວອນ ໃນເຂດສະຫງວນຂອງທາງຫຼວງ ເຊັ່ນ ເສົາໄຟຟ້າ, ທໍ່ສາຍໄຟຟ້າ, ທໍ່ນ້ຳປະປາ, ໂທລະຄົມມະນາຄົມ ແລະ ການສື່ສານ, ທໍ່ສົ່ງນ້ຳມັນ-ອາຍແກັສ, ປ້າຍໂຄສະນາ, ທາງເຂົ້າເຮືອນ, ປ້ຳນ້ຳມັນ-ອາຍແກັສ, ສະຖານທີ່ບໍລິການ ແລະ ອື່ນໆ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 450.000 ກີບ ຕໍ່ ຄັ້ງ ພ້ອມທັງໃຫ້ຍົກຍ້າຍ ຫຼື ມ້າງອອກພາຍໃນ ຊາວສີ່ ຊົ່ວໂມງພາຍຫຼັງທີ່ໄດ້ເຮັດບົດບັນທຶກໃຫ້ຍົກຍ້າຍ. ຖ້າຫາກກາຍກຳນົດເວລານັ້ນ ຜູ້ລະເມີດຈະຖືກປັບໃໝ 120.000 ກີບ ຕໍ່ ວັນ;

2. ການວາງສິ່ງຂອງ ເຊັ່ນ ປ້າຍໂຄສະນາ, ກອງໄມ້, ກອງດິນ, ກອງຫີນ, ກອງຊາຍ, ກອງເຫຼັກ ແລະ ອື່ນໆ ໃນເຂດສະຫງວນທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ ຊຶ່ງສ້າງຜົນກະທົບຕໍ່ໂຄງສ້າງຂອງທາງ, ລະບົບລະບາຍນ້ຳແຄມທາງ, ທຳລາຍລະບົບນິເວດ ຈະຖືກປັບໃໝ 300.000 ກີບ ຕໍ່ ຄັ້ງ ພ້ອມທັງໃຫ້ຍົກຍ້າຍສິ່ງກີດຂວາງດັ່ງກ່າວ ອອກພາຍໃນ ຊາວສີ່ ຊົ່ວໂມງ ພາຍຫຼັງທີ່ໄດ້ເຮັດບົດບັນທຶກໃຫ້ຍົກຍ້າຍ. ຖ້າຫາກກາຍກຳນົດເວລານັ້ນ ຜູ້ລະເມີດຈະຖືກປັບໃໝ 100.000 ກີບ ຕໍ່ ວັນ;

3. ການຂຸດ ຫຼື ຖົມດິນ ໃນເຂດສະຫງວນຂອງທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 45.000 ກີບ ຕໍ່ ແມັດກ້ອນ, ພ້ອມທັງປັບປຸງຄືນໃຫ້ຢູ່ໃນສະພາບເດີມ ພາຍໃນເວລາທີ່ກຳນົດ.ຖ້າກາຍກຳນົດເວລານັ້ນ ຜູ້ລະເມີດຈະຖືກປັບໃໝ ຊົ່ວໂມງລະ 15.000 ກີບ ຕໍ່ ໜຶ່ງ ແມັດກ້ອນ;

4. ການຖິ້ມຂີ້ເຫຍື້ອ, ສິ່ງເສດເຫຼືອ, ນ້ຳເປື້ອນ ຫຼື ສິ່ງເສດເຫຼືອອື່ນໆ ໃສ່ໃນເຂດສະຫງວນຂອງທາງ ຫຼວງ ຊຶ່ງກໍ່ ຄວາມເສຍຫາຍຕໍ່ສິ່ງແວດລ້ອມ ແລະ ລະບົບນິເວດ ຈະຖືກປັບໃໝ 100.000 ກີບ ຕໍ່ຄັ້ງ ພ້ອມທັງໃຫ້ຍົກຍ້າຍ ຫຼື ອະນາໄມສິ່ງເສດເຫຼືອດັ່ງກ່າວອອກພາຍໃນ ຊາວສີ່ ຊົ່ວໂມງ ພາຍຫຼັງທີ່ໄດ້ເຮັດບົດບັນທຶກໃຫ້ຍົກຍ້າຍ.ຖ້າຫາກກາຍກຳນົດເວລານັ້ນ ຜູ້ລະເມີດຈະຖືກປັບໃໝ 50.000 ກີບ ຕໍ່ ວັນ;

5. ການທຳລາຍໂຄງປະກອບ, ສິ່ງປະກອບທຳລາຍ, ສິ້ນສ່ວນຂອງຂົວ-ທໍ່ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 500.000 ກີບ ຕໍ່ ຄັ້ງ ພ້ອມທັງທົດແທນຄືນມູນຄ່າທີ່ເສຍຫາຍທັງໝົດ;

6. ການທຳລາຍ ຫຼື ຕັດຕົ້ນໄມ້ ທີ່ປູກໄວ້ ເພື່ອຮັກສາໂຄງສ້າງຂອງທາງ ຫຼື ປະດັບຕາມທາງຫຼວງ ໂດຍ ບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 500.000 ກີບ ຕໍ່ ຄັ້ງ ພ້ອມທັງທົດແທນຄືນມູນຄ່າທີ່ເສຍຫາຍທັງໝົດ.

**ມາດຕາ 37 ລາຍຮັບຈາກການປັບໃໝ**

ລາຍຮັບຈາກການປັບໃໝທັງໝົດມອບເຂົ້າງົບປະມານຂອງລັດ 60 ສ່ວນຮ້ອຍ ແລະ 40 ສ່ວນຮ້ອຍຈັດແບ່ງໃຫ້ພາກສ່ວນທີ່ກ່ຽວຂ້ອງແຕ່ລະຂັ້ນ ນຳໃຊ້ເຂົ້າໃນວຽກງານຄຸ້ມເຂດສະຫງວນຂອງທາງຫຼວງ, ໂດຍການນຳເອົາລາຍຮັບ 40 ສ່ວນຮ້ອຍ ມາຕີເປັນ 100 ສ່ວນຮ້ອຍ ແລະ ຈັດແບ່ງແຕ່ລະຂັ້ນ ເຊັ່ນ: ຂັ້ນແຂວງ 50 ສ່ວນຮ້ອຍ, ຂັ້ນເມືອງ 30 ສ່ວນຮ້ອຍ, ຂັ້ນບ້ານ 20 ສ່ວນຮ້ອຍ.

## ໝວດທີ 10
## ບົດບັນຍັດສຸດທ້າຍ

**ມາດຕາ 38 ການຈັດຕັ້ງປະຕິບັດ**

ມອບໃຫ້ພະແນກໂຍທາທິການ ແລະ ຂົນສົ່ງແຂວງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

ໃຫ້ບັນດາຂະແໜງການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ, ຂັ້ນບ້ານ ແລະ ປະຊາຊົນບັນດາເຜົ່າ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມພາລະບົດບາດຂອງຕົນຢ່າງເຂັ້ມງວດ.

**ມາດຕາ 39 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ, ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງ**

ວັນໄຊ ພອງສະຫວັນ